ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນ ມິຖຸນາ, 2026) ໜ້າ 123 – 131
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No 3 (June, 2026) Page 123 – 131
ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ສຶກສາການສ້າງແຮງຈູງໃຈໃນການຮຽນ-ການສອນພາສາອັງກິດຂອງນັກສຶກສາ ສາຍຄູພາສາອັງກິດຊັ້ນປີທີ 1-3 ວິທະຍາໄລຄູສິງຈຳປາສັກສົກປີ 2024-2025

# A Study of English Teaching Motivation among English Language Students, Years 1-3, Champasak Teachers College, Academic Year 2024-2025

ໄທເລີງ ຄຳພາພົງຜ່ານ[1] ແລະ ຄຳໃບ ແກ້ວສະຫວ່າງ[2]
Thayleung KHAMPHAPHONGPHAN[1]& Khambay KEOSAVANG[2]

## ບົດຄັດຫຍໍ້

ການຮຽນຮູ້ ແລະ ການສອນພາສາອັງກິດໃນປັດຈຸບັນຖືວ່າມີຄວາມສຳຄັນຫຼາຍຕໍ່ການພັດທະນາຄຸນນະພາບການສຶກສາ ແລະ ການຍົກລະດັບຄວາມເປັນມືອາຊີບຂອງຄູ ເພາະວ່າພາສາອັງກິດເປັນເຄື່ອງມືທີ່ສຳຄັນສຳລັບການສື່ສານ, ການຄົ້ນຄວ້າ ແລະ ການເຂົ້າເຖິງຄວາມຮູ້ສາກົນ. ແຮງຈູງໃຈໃນການຮຽນຮູ້ຖືວ່າເປັນປັດໄຈສຳຄັນທີ່ມີອິດທິພົນຕໍ່ຜົນສຳເລັດທາງວິຊາການ, ການພັດທະນາທັກສະພາສາ ແລະ ການສ້າງທັດສະນະຄະຕິທີ່ດີຕໍ່ການຮຽນຮູ້ໃນບັນດາຜູ້ສະໝັກເປັນຄູສອນພາສາອັງກິດ. ດັ່ງນັ້ນ, ມັນຈຳເປັນຕ້ອງສຶກສາເງື່ອນໄຂໃນການສ້າງແຮງຈູງໃຈໃນການຮຽນຮູ້ ແລະ ການສອນພາສາອັງກິດ ເພື່ອນຳໃຊ້ຂໍ້ມູນທີ່ໄດ້ຮັບເປັນແນວທາງໃນການພັດທະນາການຈັດການການສອນ ແລະ ການຮຽນຮູ້ທີ່ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການການສຶກສາໃນປັດຈຸບັນ.

ການຄົ້ນຄວ້ານີ້ມີຈຸດປະສົງເພື່ອສຶກສາເງື່ອນໄຂແຮງຈູງໃຈໃນການຮຽນ ແລະ ການສອນພາສາອັງກິດຂອງນັກສຶກສາສາຍຄູພາສາອັງກິດ ຊັ້ນປີທີ 1-3 ທີ່ວິທະຍາໄລຄູສິງຈຳປາສັກ ໃນປີການສຶກສາ 2024-2025. ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບສຳຫຼວດ ເຊິ່ງມີກຸ່ມປະຊາກອນປະກອບດ້ວຍຄູສອນ ແລະ ນັກສຶກສາຈຳນວນ 28 ອົງ/ທ່ານ, ໂດຍໄດ້ຮັບການຄັດເລືອກແບບເກັບຕົວຢ່າງປະຊາກອນທັງໝົດ (Total Population Sampling). ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມມາດຕາສ່ວນປະເມີນຄ່າ 5 ລະດັບຕາມແບບ Likert

[1] ພະແນກບໍລິຫານ ວິທະຍາໄລຄູສິງຈຳປາສັກ/ ສປປ ລາວ.
[2] ວິທະຍາໄລຄູສິງຈຳປາສັກ/ ສປປ ລາວ.
Corresponding Author: Thayleung KHAMPHAPHONGPHAN, Email: thayleungnoy@gmail.com,
Tel: +856-20-5216-1041

Scale. ຂໍ້ມູນໄດ້ຖືກວິເຄາະໂດຍໃຊ້ສະຖິຕິພື້ນຖານ ປະກອບມີ: ຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການສຶກສາພົບວ່າ ລະດັບແຮງຈູງໃຈໃນການຮຽນ-ການສອນພາສາອັງກິດໂດຍລວມຂອງນັກສຶກສາຄູພາສາອັງກິດຢູ່ໃນລະດັບປານກາງ ($\mu = 3.24$, $\sigma = 1.35$). ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ດ້ານຜົນໄດ້ຮັບຂອງແຮງຈູງໃຈມີຄ່າສະເລ່ຍສູງສຸດ ($\mu = 3.29$) ຮອງລົງມາແມ່ນດ້ານແຮງຈູງໃຈໃນການສອນ ($\sigma = 3.19$). ນອກຈາກນັ້ນ ລາຍການທີ່ມີຄະແນນສະເລ່ຍສູງສຸດ ແມ່ນການໃຫ້ກຳລັງໃຈ ແລະ ການຍ້ອງຍໍຈາກຄູສອນຕໍ່ນັກຮຽນ ($\mu = 3.52$) ຊຶ່ງສະທ້ອນໃຫ້ເຫັນວ່າ ການສົ່ງເສີມທາງບວກຈາກຄູສອນເປັນປັດໃຈສຳຄັນທີ່ຊ່ວຍກະຕຸ້ນແຮງຈູງໃຈໃນການຮຽນຂອງນັກສຶກສາ. ໃນຂະນະດຽວກັນ ດ້ານຄວາມໝັ້ນໃຈທາງສັງຄົມມີຄະແນນສະເລ່ຍຕ່ຳສຸດ ($\mu = 2.55$) ສະແດງໃຫ້ເຫັນວ່າ ນັກສຶກສາຍັງຂາດຄວາມໝັ້ນໃຈໃນການປະຕິສຳພັນ ແລະ ການນຳໃຊ້ພາສາອັງກິດໃນສັງຄົມ. ສຳລັບດ້ານຜົນໄດ້ຮັບ ພົບວ່າ ການເພີ່ມຄວາມສາມາດໃນການສະແດງຄວາມຄິດເຫັນມີຄະແນນສະເລ່ຍສູງສຸດ ($\mu = 3.66$) ຊຶ່ງບົ່ງຊີ້ວ່າ ນັກສຶກສາຮັບຮູ້ເຖິງພັດທະນາການດ້ານການຄິດ ແລະ ການສື່ສານຂອງຕົນເອງຫຼາຍຂຶ້ນ ຫຼັງຈາກໄດ້ຮັບການຮຽນການສອນ. ແຕ່ໃນຂະນະດຽວກັນ ຄວາມສາມາດໃນການສື່ສານກັບເຈົ້າຂອງພາສາມີຄະແນນສະເລ່ຍຕ່ຳສຸດ ($\mu = 2.38$) ອາດເນື່ອງມາຈາກຂໍ້ຈຳກັດດ້ານສະພາບແວດລ້ອມ ແລະ ໂອກາດໃນການຝຶກຝົນການນຳໃຊ້ພາສາອັງກິດກັບເຈົ້າຂອງພາສາໂດຍກົງ.

ຈາກຜົນການສຶກສາ ສາມາດສະຫຼຸບໄດ້ວ່າ ແຮງຈູງໃຈໃນການຮຽນ ແລະ ການສອນພາສາອັງກິດຂອງນັກສຶກສາຄູພາສາອັງກິດຢູ່ໃນລະດັບປານກາງ ໂດຍປັດໃຈດ້ານການໃຫ້ກຳລັງໃຈ ແລະ ການສົ່ງເສີມຈາກຄູສອນເປັນປັດໃຈທີ່ມີອິດທິພົນຕໍ່ແຮງຈູງໃຈຂອງນັກສຶກສາຫຼາຍທີ່ສຸດ. ດັ່ງນັ້ນ ສະຖາບັນການສຶກສາ ແລະ ຄູສອນ ຄວນໃຫ້ຄວາມສຳຄັນກັບການສ້າງບັນຍາກາດການຮຽນທີ່ເອື້ອອຳນວຍຕໍ່ການຮຽນຮູ້ ພ້ອມທັງເປີດໂອກາດໃຫ້ນັກສຶກສາໄດ້ຝຶກທັກສະການສື່ສານກັບເຈົ້າຂອງພາສາຫຼາຍຂຶ້ນ ເພື່ອຊ່ວຍພັດທະນາແຮງຈູງໃຈ ແລະ ເພີ່ມປະສິດທິຜົນໃນການຮຽນຮູ້ພາສາອັງກິດຢ່າງຍືນຍົງ.

**ຄຳສັບທີ່ສຳຄັນ:** ການເສີມສ້າງໃນທາງບວກ, ການຮຽນ-ການສອນພາສາອັງກິດ, ແຮງຈູງໃຈໃນການຮຽນ

## Abstract

English language learning and teaching are currently considered highly important for the development of educational quality and the enhancement of teacher professionalism, as English serves as an essential tool for communication, research, and access to international knowledge. Motivation for learning is a critical factor influencing academic achievement, language skill development, and the formation of positive attitudes toward learning among pre-service English teachers. Therefore, it is necessary to study the conditions for creating motivation in English language learning and teaching to use the findings as guidelines for developing effective instructional management aligned with the current educational context.

This research aims to study the motivational conditions in learning and teaching English among English education students in years 1–3 at Champasak Sangha Teacher Training College during the 2024–2025 academic year. The study employs a survey research design with a population consisting of 28 teachers and students selected through Total Population Sampling. The instrument used for data collection was a 5-point Likert scale questionnaire. Data were analyzed using basic statistics, including frequency, percentage, mean, and standard deviation. The results of the study indicated that the overall motivation level for learning and teaching English among the student teachers was at a moderate level ($\mu = 3.24$, $\sigma = 1.35$). Considering each dimension, the outcome of motivation yielded the highest mean score ($\mu = 3.29$), followed by motivation in teaching ($\mu = 3.19$). Furthermore, the item with the highest mean score was encouragement and praise from teachers to students ($\mu = 3.52$), reflecting that positive

reinforcement from teachers is a vital factor in stimulating students' learning motivation. Conversely, social confidence received the lowest mean score (μ = 2.55), indicating that students still lack confidence in interacting and using English socially. Regarding the outcomes, increasing students' ability to express opinions had the highest mean score (μ = 3.66), demonstrating that students noticed improvements in their thinking and communication skills after the instruction. However, the ability to communicate with native speakers received the lowest mean score (μ = 2.38), likely due to environmental constraints and limited opportunities to practice English directly with native speakers.
In conclusion, the motivation for learning and teaching English among pre-service English teachers is at a moderate level, with encouragement and support from teachers being the most influential factors. Therefore, educational institutions and teachers should place greater emphasis on creating a conducive learning environment and providing more opportunities for students to practice communication skills with native speakers to foster motivation and sustainable English learning efficiency.
**Keywords:** English language teaching, Learning motivation, Positive reinforcement

## ບົດນຳ

ໃນສະພາບໂລກປັດຈຸບັນ ການສື່ສານ ແລະ ການພົວພັນລະຫວ່າງມະນຸດໄດ້ພັດທະນາໄປຢ່າງວ່ອງໄວ ໂດຍມີເທັກໂນໂລຊີ ແລະ ສື່ອອນລາຍເປັນປັດໃຈສຳຄັນໃນການເຊື່ອມໂຍງຜູ້ຄົນຈາກຫຼາຍປະເທດເຂົ້າຫາກັນ. ພາສາຈຶ່ງກາຍເປັນເຄື່ອງມືຫຼັກໃນການຖ່າຍທອດຂໍ້ມູນ ຄວາມຄິດ ແລະ ຄວາມໝາຍ (ສີທັນດອນ ມະນີວົງ, 2004). ໃນບັນດາພາສາຕ່າງໆ ພາສາອັງກິດໄດ້ຖືກຍອມຮັບໃຫ້ເປັນພາສາສາກົນ ແລະ ເປັນພາສາກາງໃນການສື່ສານລະດັບນານາຊາດ ທັງໃນດ້ານການສຶກສາ ການເຮັດວຽກ ແລະ ການພົວພັນລະຫວ່າງປະເທດ. ດັ່ງນັ້ນ ການພັດທະນາທັກສະພາສາອັງກິດ ໂດຍສະເພາະທັກສະການເວົ້າ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ເພື່ອໃຫ້ຜູ້ຮຽນສາມາດນຳໃຊ້ພາສາໃນການສື່ສານໄດ້ຢ່າງຖືກຕ້ອງ ແລະ ມີປະສິດທິພາບ (Shumin, 1998).

ການສຶກສາເປັນກົນໄກສຳຄັນໃນການພັດທະນາຄົນ ແລະ ສັງຄົມ ໂດຍມຸ່ງເນັ້ນໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດ ແລະ ທັກສະທີ່ສອດຄ່ອງກັບການປ່ຽນແປງຂອງສັງຄົມ. ສຳລັບ ສປປ ລາວ ການພັດທະນາຊັບພະຍາກອນມະນຸດໄດ້ຖືກກຳນົດເປັນນະໂຍບາຍສຳຄັນ ໂດຍເນັ້ນໃສ່ການຍົກລະດັບຄຸນນະພາບການສຶກສາ ແລະ ພັດທະນາຄູອາຈານໃຫ້ມີຄວາມສາມາດທາງວິຊາຊີບ. ກະຊວງສຶກສາ ແລະ ກິລາ ຍັງໄດ້ມຸ່ງເນັ້ນໃຫ້ການຮຽນ-ການສອນພາສາອັງກິດພັດທະນາທັກສະທັງ 4 ດ້ານ ໄດ້ແກ່ ການຟັງ ການເວົ້າ ການອ່ານ ແລະ ການຂຽນ (ກະຊວງສຶກສາທິການ ແລະ ກິລາ, 2009). ໃນບັນດາທັກສະດັ່ງກ່າວ ທັກສະການເວົ້າຖືວ່າເປັນທັກສະທີ່ສຳຄັນທີ່ສຸດ ເນື່ອງຈາກເປັນຕົວຊີ້ວັດຄວາມສາມາດໃນການນຳໃຊ້ພາສາເພື່ອການສື່ສານໂດຍກົງ (Shumin, 1998). ນອກຈາກນັ້ນ ທິດສະດີດ້ານແຮງຈູງໃຈຍັງອະທິບາຍວ່າ ແຮງຈູງໃຈເປັນປັດໃຈສຳຄັນທີ່ຊ່ວຍກະຕຸ້ນໃຫ້ຜູ້ຮຽນເກີດຄວາມສົນໃຈ ຄວາມພະຍາຍາມ ແລະ ຄວາມຕັ້ງໃຈໃນການຮຽນຮູ້.

ເຖິງແມ່ນວ່າການຮຽນ-ການສອນພາສາອັງກິດໃນສະຖາບັນການສຶກສາຈະໄດ້ຮັບການສົ່ງເສີມຢ່າງຕໍ່ເນື່ອງ ແຕ່ໃນຄວາມເປັນຈິງ ນັກຮຽນ ແລະ ນັກສຶກສາຈຳນວນໜຶ່ງຍັງປະສົບບັນຫາໃນການຮຽນພາສາອັງກິດ ເຊັ່ນ: ຂາດສະພາບແວດລ້ອມໃນການໃຊ້ພາສາ, ຂາດຄວາມໝັ້ນໃຈ, ບໍ່ກ້າສະແດງອອກ ແລະ ຂາດແຮງຈູງໃຈໃນການຮຽນ. ສຳລັບວິທະຍາໄລຄູສົງຈຳປາສັກ ການຈັດການຮຽນ-ການສອນພາສາອັງກິດໄດ້ດຳເນີນຕາມຫຼັກສູດຂອງກະຊວງ ແຕ່ຈາກການສັງເກດພົບວ່າ ນັກສຶກສາຫຼາຍອົງຍັງມີຜົນສຳເລັດດ້ານການໃຊ້ພາສາອັງກິດຢູ່ໃນລະດັບຕ່ຳ ໂດຍສະເພາະທັກສະການເວົ້າ ການຟັງ ການອ່ານ ແລະ ການຂຽນ. ບັນຫາດັ່ງກ່າວສົ່ງຜົນໃຫ້ນັກສຶກສາຂາດຄວາມກ້າໃນການນຳໃຊ້ພາສາອັງກິດເພື່ອການສື່ສານ ແລະ ຂາດຄວາມກະຕືລືລົ້ນໃນການຮຽນຮູ້.

ຈາກສະພາບບັນຫາດັ່ງກ່າວ ສາມາດເຫັນໄດ້ວ່າ ແຮງຈູງໃຈເປັນປັດໃຈສຳຄັນທີ່ມີອິດທິພົນຕໍ່ການຮຽນຮູ້ ແລະ ການພັດທະນາທັກສະພາສາອັງກິດຂອງນັກສຶກສາ ການສ້າງແຮງຈູງໃຈຈະຊ່ວຍໃຫ້ຜູ້ຮຽນມີຄວາມສົນໃຈ ມີທັດສະນະທີ່ດີ ແລະ ມີຄວາມກ້າໃນການນຳໃຊ້ພາສາອັງກິດໃນການສື່ສານ ດັ່ງນັ້ນ ຜູ້ວິໄຈຈຶ່ງມີຄວາມສົນໃຈສຶກສາກ່ຽວກັບ ການສ້າງແຮງຈູງໃຈໃນການຮຽນ-ການສອນພາສາອັງກິດ ຂອງນັກສຶກສາສາຍຄູພາສາອັງກິດຊັ້ນປີທີ 1-3 ວິທະຍາໄລຄູສົງຈຳປາສັກ ເພື່ອນຳຜົນການສຶກສາໄປໃຊ້ເປັນແນວທາງໃນການພັດທະນາການຮຽນ-ການສອນພາສາອັງກິດໃຫ້ມີຄຸນນະພາບ ແລະ ສອດຄ່ອງກັບມາດຕະຖານການສຶກສາຕໍ່ໄປ.

## ຈຸດປະສົງ

1. ເພື່ອສຶກສາສະພາບການສ້າງແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ ໃຫ້ເໝາະສົມກັບຊັ້ນຮຽນທີ່ວິທະຍາໄລຄູສົງຈຳປາສັກ

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ເປັນການວິໄຈແບບສຳຫຼວດ (Survey Research) ມີຈຸດປະສົງເພື່ອສຶກສາສະພາບການສ້າງແຮງຈູງໃຈຕໍ່ການຮຽນ–ການສອນພາສາອັງກິດ ຂອງນັກສຶກສາສາຍຄູພາສາອັງກິດ ຊັ້ນປີທີ 1–3 ວິທະຍາໄລຄູສົງຈຳປາສັກ ສົກປີ 2024–2025 ໂດຍອີງຕາມແນວຄິດຂອງ John W. Creswell (2014) ຊຶ່ງເນັ້ນການເກັບຮວບຮວມຂໍ້ມູນຈາກກຸ່ມຕົວຢ່າງຢ່າງເປັນລະບົບ ເພື່ອນຳມາວິເຄາະ ແລະ ສະຫຼຸບຜົນການສຶກສາ.

### ຜູ້ເຂົ້າຮ່ວມການວິໄຈ

ປະຊາກອນທີ່ໃຊ້ໃນການວິໄຈ ປະກອບດ້ວຍຄູສອນວິຊາພາສາອັງກິດ ຈຳນວນ 5 ອົງ/ທ່ານ ແລະ ນັກສຶກສາສາຍຄູພາສາອັງກິດ ຊັ້ນປີທີ 1–3 ຈຳນວນ 23 ອົງ/ທ່ານ ລວມທັງໝົດ 28 ອົງ/ທ່ານ. ເນື່ອງຈາກປະຊາກອນມີຂະໜາດນ້ອຍ ຜູ້ວິໄຈຈຶ່ງໄດ້ນຳໃຊ້ວິທີການເລືອກກຸ່ມຕົວຢ່າງແບບທັງໝົດ (Total Sampling) ຕາມແນວຄິດຂອງ (Ibrahim Etikan ແລະ ຄະນະ, 2016) ໂດຍນຳເອົາປະຊາກອນທັງໝົດມາເປັນກຸ່ມຕົວຢ່າງໃນການສຶກສາ.

### ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈ ແມ່ນແບບສອບຖາມ ທີ່ຜູ້ວິໄຈສ້າງຂຶ້ນໂດຍອີງຕາມແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ ຕາມແນວຄິດຂອງ (Rensis Likert, 1932) ໂດຍແບ່ງອອກເປັນ 2 ຕອນ ຄື:

- ຕອນທີ 1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ
- ຕອນທີ 2 ແບບປະເມີນຄ່າແບບມາດຕາສ່ວນ 5 ລະດັບ (Rating Scale) ເພື່ອວັດລະດັບຄວາມຄິດເຫັນ ໂດຍກຳນົດຄະແນນຕັ້ງແຕ່ 5 ຄະແນນ (ດີຫຼາຍ) ຫາ 1 ຄະແນນ (ອ່ອນຫຼາຍ) ພ້ອມກຳນົດເກນການແປຜົນຕາມຊ່ວງຄ່າສະເລ່ຍ.

### ໃນການພັດທະນາເຄື່ອງມື

ຜູ້ວິໄຈໄດ້ສຶກສາເອກະສານ ແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ ເພື່ອນຳມາສ້າງແບບສອບຖາມໃຫ້ສອດຄ່ອງກັບຈຸດປະສົງການວິໄຈ. ຫຼັງຈາກນັ້ນ ໄດ້ນຳເຄື່ອງມືໄປໃຫ້ອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານກວດສອບຄວາມຖືກຕ້ອງດ້ານເນື້ອໃນ ພ້ອມທັງກວດສອບຄວາມສອດຄ່ອງຂອງຂໍ້ຄຳຖາມກັບຈຸດປະສົງ (Index of Item Objective Congruence: IOC) ຕາມແນວຄິດຂອງ Richard J. Rovinelli ແລະ Ronald K. Hambleton (1977) ກ່ອນນຳໄປໃຊ້ເກັບຂໍ້ມູນຈິງ.

**ວິທີລວບລວມຂໍ້ມູນ**

ການເກັບຮວບຮວມຂໍ້ມູນ ດຳເນີນການໂດຍຜູ້ວິໄຈໄດ້ຂໍອະນຸຍາດຈາກຄະນະອຳນວຍການຂອງວິທະຍາໄລຄູສິງຈຳປາສັກ ເພື່ອເຂົ້າເກັບຂໍ້ມູນ. ຫຼັງຈາກນັ້ນ ໄດ້ນຳແບບສອບຖາມໄປເກັບຂໍ້ມູນຈາກກຸ່ມຕົວຢ່າງດ້ວຍຕົນເອງ ແລະ ກວດສອບຄວາມສົມບູນຂອງແບບສອບຖາມກ່ອນນຳໄປວິເຄາະຂໍ້ມູນ.

**ການວິເຄາະຂໍ້ມູນ**

ຜູ້ວິໄຈໄດ້ນຳໃຊ້ສະຖິຕິພື້ນຖານ ປະກອບມີ ຄ່າຄວາມຖີ່ (Frequency) ຄ່າສ່ວນຮ້ອຍ (Percentage) ຄ່າສະເລ່ຍ (Mean) ແລະ ຄ່າສ່ວນບ່ຽງເບນມາດຕະຖານ (Standard Deviation) ຕາມແນວຄິດຂອງ John W. Best ແລະ James V. Kahn (2006) ເພື່ອອະທິບາຍສະພາບຂໍ້ມູນ ແລະ ສະຫຼຸບຜົນການວິໄຈຢ່າງເປັນລະບົບ.

**ສູດທີ່ໃຊ້ ເມື່ອເກັບປະຊາກອນທັງໝົດ**

1. **ຄ່າຄວາມຖີ່ *(f)***

f = ຈຳນວນທີ່ນັບໄດ້ຈິງ

2. **ຄ່າສ່ວນຮ້ອຍ (%)**

$$P = \frac{f}{N} \times 100$$

ໃຊ້ **N** (ຕົວໃຫຍ່) = ປະຊາກອນທັງໝົດ

3. **ຄ່າສະເລ່ຍ (μ)**

$$\mu = \frac{\Sigma X}{N}$$

| **ສັນຍາລັກ** | **ໝາຍຄວາມວ່າ** |
|---|---|
| μ | ຄ່າສະເລ່ຍຂອງປະຊາກອນ |
| ΣX | ຜົນລວມຄະແນນທັງໝົດ |
| N | ຈຳນວນປະຊາກອນທັງໝົດ |

**ຄ່າສ່ວນບ່ຽງເບນມາດຕະຖານ (σ)**

$$\sigma = \sqrt{\frac{\sum (X-\mu)^2}{N}}$$

## ຜົນການວິໄຈ ແລະ ອະພິປາຍຜົນ

### ຜົນການວິໄຈ

ການຄົ້ນຄວ້ານີ້, "ແຮງຈູງໃຈຕໍ່ການຮຽນຮູ້ ແລະ ການສອນພາສາອັງກິດໃນບັນດານັກສຶກສາຄູສອນພາສາອັງກິດປີທີ 1 - 3 ທີ່ວິທະຍາໄລຄູສອນສິງຈໍາປາສັກ, ປີການສຶກສາ 2024–2025," ມີຈຸດປະສົງເພື່ອສຶກສາລະດັບແຮງຈູງໃຈ ແລະ ຜົນໄດ້ຮັບຂອງແຮງຈູງໃຈດັ່ງກ່າວໃນການຮຽນພາສາອັງກິດ ກຸ່ມຕົວຢ່າງປະກອບດ້ວຍ 28 ອົງ/ທ່ານ, ລວມທັງຄູສອນ ແລະ ນັກສຶກສາ.

ການວິເຄາະສະຖານະພາບທົ່ວໄປຂອງຜູ້ຕອບແບບສອບຖາມສະແດງໃຫ້ເຫັນວ່າສ່ວນໃຫຍ່ແມ່ນນັກຮຽນ (82.76%), ຕິດຕາມມາດ້ວຍຄູສອນ (17.24%) ເມື່ອພິຈາລະນາສະຖານະພາບຂອງເຂົາເຈົ້າ, ສ່ວນໃຫຍ່ແມ່ນພະສົງ (48%), ຕິດຕາມມາດ້ວຍສາມະເນນ (30%), ແລະ ຄາລະວາດ (22%), ເຊິ່ງສະທ້ອນໃຫ້ເຫັນເຖິງສະພາບການສະເພາະຂອງສະຖາບັນການສຶກສາພຸດທະສາສະໜາ.

ລະດັບໂດຍລວມຂອງແຮງຈູງໃຈຕໍ່ການຮຽນຮູ້ ແລະ ການສອນພາສາອັງກິດກໍ່ໄດ້ຖືກກວດສອບເຊັ່ນກັນ ລະດັບໂດຍລວມຂອງແຮງຈູງໃຈພົບວ່າຢູ່ໃນລະດັບປານກາງ ($\mu = 3.24$, $\sigma = 1.35$) ໂດຍພິຈາລະນາແຕ່ລະດ້ານ, ລັກສະນະຂອງຜົນໄດ້ຮັບຈາກແຮງຈູງໃຈມີຄ່າສະເລ່ຍສູງສຸດ ($\mu = 3.29$), ຕິດຕາມມາດ້ວຍແຮງຈູງໃຈໃນການສອນ ($\mu = 3.19$) ທັງສອງດ້ານຢູ່ໃນລະດັບປານກາງ.

ກ່ຽວກັບລາຍການສ່ວນບຸກຄົນພາຍໃນດ້ານແຮງຈູງໃຈ, ລາຍການທີ່ມີຄ່າສະເລ່ຍສູງສຸດແມ່ນ "ນັກຮຽນຮູ້ສຶກມີແຮງຈູງໃຈທີ່ຈະຮຽນພາສາອັງກິດເມື່ອຄູສອນຊຸກຍູ້ ແລະ ຍ້ອງຍໍເຂົາເຈົ້າ" ($\mu = 3.52$), ເຊິ່ງຊີ້ບອກເຖິງລະດັບສູງຂອງການເສີມສ້າງໃນທາງບວກຈາກຄູສອນທີ່ມີບົດບາດສໍາຄັນໃນແຮງຈູງໃຈໃນການຮຽນຮູ້. ຕິດຕາມມາດ້ວຍການຊຸກຍູ້ໃຫ້ນັກຮຽນໃຊ້ພາສາອັງກິດໃນຫ້ອງຮຽນ ($\mu = 3.48$) ແລະ ເພີ່ມທະວີຄວາມຮັບຮູ້ກ່ຽວກັບຄວາມສໍາຄັນຂອງພາສາອັງກິດໃນຍຸກສະໄໝໃໝ່ ($\mu = 3.45$). ລາຍການທີ່ມີຄ່າສະເລ່ຍຕໍ່າສຸດແມ່ນຄວາມໝັ້ນໃຈທາງສັງຄົມ ($\mu = 2.55$), ເຊິ່ງສະທ້ອນເຖິງຂໍ້ຈໍາກັດໃນຄວາມໝັ້ນໃຈໃນຕົນເອງຂອງນັກຮຽນ.

ໃນດ້ານຜົນໄດ້ຮັບຈາກແຮງຈູງໃຈ, ລະດັບໂດຍລວມແມ່ນປານກາງ ($\mu = 3.29$). ລາຍການທີ່ມີຄ່າສະເລ່ຍສູງສຸດແມ່ນ "ການເສີມສ້າງຄວາມສາມາດຂອງນັກຮຽນໃນການສະແດງອອກຄວາມຄິດເຫັນຂອງເຂົາເຈົ້າ" ($\mu = 3.66$), ເຊິ່ງຊີ້ບອກເຖິງລະດັບປະສິດທິພາບສູງ. ການສຶກສາສະແດງໃຫ້ເຫັນວ່າແຮງຈູງໃຈມີຜົນກະທົບປານກາງຕໍ່ການພັດທະນາທັກສະການສື່ສານ ແລະ ການສະແດງອອກ, ຕິດຕາມມາດ້ວຍການປັບປຸງຜົນສໍາເລັດທາງວິຊາການ ($\mu = 3.45$) ແລະ ການພັດທະນາຄວາມພາກພຽນ, ຄວາມພາກພຽນ, ແລະ ຄວາມໝັ້ນໃຈໃນການຮຽນຮູ້ ($\mu = 3.41$). ລາຍການທີ່ມີຄະແນນສະເລ່ຍຕໍ່າສຸດແມ່ນຄວາມສາມາດໃນການສື່ສານກັບຜູ້ທີ່ເວົ້າພາສາພື້ນເມືອງ ($\mu = 2.38$), ເຊິ່ງຊີ້ບອກເຖິງສິ່ງທ້າທາຍໃນການພັດທະນາທັກສະການສື່ສານຢ່າງເລິກເຊິ່ງ.

ສະຫຼຸບແລ້ວ, ແຮງຈູງໃຈມີຜົນກະທົບປານກາງຕໍ່ການຮຽນຮູ້ພາສາອັງກິດຂອງນັກຮຽນ, ທັງໃນດ້ານຂະບວນການ ແລະ ຜົນໄດ້ຮັບ ຢ່າງໃດກໍຕາມ, ການເສີມສ້າງໃນທາງບວກຈາກຄູ, ເຊັ່ນ: ການຊຸກຍູ້, ການຍ້ອງຍໍ, ແລະ ໂອກາດໃຫ້ນັກຮຽນມີສ່ວນຮ່ວມໃນກິດຈະກໍາການຮຽນຮູ້, ເປັນປັດໄຈສໍາຄັນໃນການເພີ່ມແຮງຈູງໃຈ ແລະ ປະກອບສ່ວນເຂົ້າໃນການພັດທະນາທັກສະພາສາອັງກິດຂອງນັກຮຽນ.

1) ການຫາຄ່າສະເລ່ຍ ແລະ ຄ່າບ່ຽງເບນມາດຕະຖານກ່ຽວກັບການສຶກສາການສ້າງແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ ຂອງນັກສຶກສາ ສາຍຄູພາສາອັງກິດ ຊັ້ນປີທີ 1 - 3 ຂອງວິທະຍາໄລຄູສົງຈາປາສັກ ສົກປີ 2024-2025

**ຕາຕະລາງ 1:** ການຫາຄ່າສະເລ່ຍ ແລະ ຄ່າບ່ຽງເບນມາດຕະຖານກ່ຽວກັບການສຶກສາການສ້າງແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ ຂອງນັກສຶກສາ ສາຍຄູພາສາອັງກິດ ຊັ້ນປີທີ 1 - 3 ຂອງວິທະຍາໄລຄູສົງຈາປາສັກ ສົກປີ 2024-2025.

| ລ/ດ | ເນື້ອໃນແບບສອບຖາມ | ລະດັບຄວາມຄິດເຫັນ | | | |
|---|---|---|---|---|---|
| | | $\mu$ | $\sigma$ | ຄວາມເຫັນ | ອັນດັບ |
| **I. ດ້ານການສ້າງແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ.** | | | | | |
| 1 | ຄູມີວິທີການສຶກສາອົບຮົມນັກຮຽນທີ່ຮຽນອ່ອນ ແລະ ໃຫ້ກຳລັງໃຈເຂົາເຈົ້າ | 3.34 | 1.42 | ປານກາງ | 7 |
| 2 | ຂ້ອຍຮູ້ສຶກຢາກຮຽນພາສາອັງກິດເມື່ອອາຈານໃຫ້ກຳລັງໃຈ ແລະ ຍ້ອງຍໍ | 3.52 | 1.33 | ຫຼາຍ | 1 |
| 3 | ແຮງຈູງໃຈເປັນຕົວສົ່ງເສີມໃຫ້ນັກຮຽນສາມາດຮຽນພາສາໄດ້ດີ | 3.21 | 1.37 | ປານກາງ | 9 |
| 4 | ຄູມີວິທີການແນະນຳນັກຮຽນໃນການເຝິກການຮຽນພາສາອັງກິດ | 3.14 | 1.43 | ປານກາງ | 11 |
| 5 | ຄູໄດ້ມີການໂອ້ລົມເຖິງຄວາມສຳຄັນກ່ຽວກັບພາສາອັງກິດໃນຍຸກປັດຈຸບັນໃຫ້ນັກຮຽນໄດ້ຮັບຮູ້ ແລະ ເຂົ້າໃຈ | 3.45 | 1.45 | ປານກາງ | 3 |
| 6 | ຄູໄດ້ມີວິທີໃໝ່ໆໃນການສອນເພື່ອໃຫ້ນັກຮຽນມີຄວາມມ່ວນຊື່ນ | 3.07 | 1.39 | ປານກາງ | 12 |
| 7 | ອາຈານຂອງຂ້ອຍໄດ້ຊຸກຍູ້ໃຫ້ຂ້ອຍເວົ້າພາສາອັງກິດໃນຫ້ອງຮຽນ | 3.48 | 1.38 | ປານກາງ | 2 |
| 8 | ໃຊ້ຮູບແບບການສອນ ຫຼື ກຳນົດກິດຈະກຳທີ່ສ້າງແຮງຈູງໃຈໃຫ້ນັກຮຽນໃຫ້ຫຼາຍ | 3.07 | 1.36 | ປານກາງ | 12 |
| 9 | ຄູໄດ້ນຳພານັກຮຽນສ້າງບັນຍາກາດໃນແຕ່ລະຊ່ວງເວລາດຳເນີນການສອນ | 3.45 | 1.40 | ປານກາງ | 3 |
| 10 | ການຮຽນຮູ້ພາສາອັງກິດຜ່ານກິດຈະກຳເຊັ່ນ: ເກມ ຫຼື ການສະແດງບົດບາດ, ເຮັດໃຫ້ຂ້ອຍມີຄວາມສົນໃຈໃນການຮຽນຫຼາຍຂຶ້ນ | 3.34 | 1.32 | ປານກາງ | 7 |
| 11 | ນັກຮຽນທີ່ມີແຮງຈູງໃຈສູງຈະໃຊ້ຄວາມພະຍາຍາມເພື່ອບັນລຸເປົ້າໝາຍ | 3.45 | 1.40 | ປານກາງ | 3 |
| 12 | ແມ່ນການກະຕຸ້ນໃຫ້ນັກຮຽນເກີດຄວາມກະຕືລືລົ້ນ ແລະ ຄຸ້ມຄ່າຕໍ່ການຮຽນຮູ້ | 3.38 | 1.37 | ປານກາງ | 6 |
| 13 | ນັກສຶກສາມີຄວາມໝັ້ນໃຈທາງສັງຄົມ ແລະ ກ້າສະແດງອອກໃນການໃຊ້ພາສາ | 2.55 | 1.33 | ປານກາງ | 14 |
| 14 | ຂ້ອຍຮຽນພາສາອັງກິດເພື່ອສື່ສານກັບຄົນຕ່າງປະເທດ | 3.17 | 1.34 | ປານກາງ | 10 |

**ຕາຕະລາງ 2:** ການຫາຄ່າສະເລ່ຍຜົນໄດ້ຮັບຈາກການສ້າງແຮງຈູງໃຈໃນການຮຽນ-ການສອນພາສາອັງກິດ.

| ລ/ດ | ເນື້ອໃນແບບສອບຖາມ | ລະດັບຄວາມຄິດເຫັນ | | | |
|---|---|---|---|---|---|
| | | $\mu$ | $\sigma$ | ຄວາມເຫັນ | ອັນດັບ |
| II. | **ດ້ານຜົນໄດ້ຮັບຈາກການສ້າງແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ** | | | | |
| 1 | ເອົາໃຈໃສ່ຕັ້ງໃຈຮໍ່າຮຽນຢ່າງຂະຫຍັນຂັນແຂງ ແລະ ອົດທົນ | 3.41 | 1.40 | ປານກາງ | 3 |
| 2 | ເຮັດໃຫ້ຜົນການຮຽນຂອງນັກຮຽນດີເດັ່ນ. | 3.45 | 1.38 | ປານກາງ | 2 |
| 3 | ກະຕຸ້ນໃຫ້ນັກຮຽນໃຫ້ມີຄວາມກະຕືລືລົ້ນໃນການຮຽນ | 3.33 | 1.33 | ປານກາງ | 10 |
| 4 | ຊ່ວຍໃຫ້ການຮຽນມີປະສິດທິພາບທີ່ດີຂຶ້ນ | 2.93 | 1.39 | ປານກາງ | 11 |
| 5 | ເສີມສ້າງກຳລັງໃຈໃຫ້ນັກຮຽນມີຄວາມສາມາດສະແດງຄວາມຄິດເຫັນຂອງຕົນເອງຕໍ່ໝູ່ເພື່ອນ ແລະ ຄູອາຈານ | 3.66 | 1.21 | ຫຼາຍ | 1 |
| 6 | ເປັນການສ້າງພະລັງງານໃຫ້ນັກຮຽນມີຄວາມໝັ້ນໃຈໃນການຕອບຄຳຖາມຄູ-ອາຈານຫຼາຍຂຶ້ນ. | 3.41 | 1.38 | ປານກາງ | 3 |
| 7 | ໃຫ້ນັກຮຽນມີຄວາມສົນໃຈຢາກຮູ້ຢາກເຫັນໃນສິ່ງທີ່ຕົນກຳລັງຮຽນ | 3.38 | 1.16 | ປານກາງ | 7 |
| 8 | ເກີດມີຄວາມພະຍາຍາມຫຼາຍຂຶ້ນຈົນສາມາດສື່ສານກັບເຈົ້າຂອງພາສາໄດ້ເປັນຢ່າງດີ | 2.38 | 1.30 | ໜ້ອຍ | 12 |
| 9 | ຊ່ວຍຈູງໃຈໃຫ້ນັກຮຽນໃນຫ້ອງເກີດມີຄວາມຄິດສ້າງສັນໃນການເຮັດກິດຈະກຳຕ່າງໆຂະນະທີ່ຮຽນ | 3.41 | 1.33 | ປານກາງ | 3 |
| 10 | ເປັນການສ້າງຄວາມກ້າວໜ້າໃຫ້ແກ່ບັນດານັກຮຽນໃຫ້ມີເປົ້າໝາຍໃນການຮຽນພາສາອັງກິດ | 3.38 | 1.37 | ປານກາງ | 7 |
| 11 | ຍັງສາມາດນຳເອົາຄວາມຮູ້ທາງດ້ານພາສາໄປນຳໃຊ້ໃນການເຮັດວຽກ ຫຼື ທ່ອງທ່ຽວໃນບັນດາປະເທດທີ່ນຳໃຊ້ພາສາອັງກິດເປັນພາສາກາງ | 3.36 | 1.34 | ປານກາງ | 9 |
| 12 | ສາມາດນຳໄປປະຍຸກໃຊ້ໃນຊີວິດປະຈຳວັນໄດ້. | 3.41 | 1.43 | ປານກາງ | 3 |
| **ລວມ** | | **3.29** | **1.33** | **ປານກາງ** | |

**ອະພິປາຍຜົນການວິໄຈ**

ຜົນການຄົ້ນຄວ້າກ່ຽວກັບ “ແຮງຈູງໃຈໃນການຮຽນ ແລະ ການສອນພາສາອັງກິດໃນບັນດານັກສຶກສາຄູສອນພາສາອັງກິດປີທີ 1 - 3 ທີ່ວິທະຍາໄລຄູສິງຈຳປາສັກ” ສາມາດສັງລວມໄດ້ດັ່ງຕໍ່ໄປນີ້:

ກ່ອນອື່ນໝົດ, ການສຶກສາພົບວ່າລະດັບໂດຍລວມຂອງແຮງຈູງໃຈໃນການຮຽນ ແລະ ການສອນພາສາອັງກິດແມ່ນປານກາງ, ເຊິ່ງສອດຄ່ອງກັບແນວຄວາມຄິດຂອງ Deci ແລະ Ryan (2000) ຜູ້ທີ່ອະທິບາຍວ່າແຮງຈູງ

ໃຈຂອງຜູ້ຮຽນເກີດຂຶ້ນຢ່າງມີປະສິດທິພາບເມື່ອຄວາມຕ້ອງການທາງຈິດໃຈພື້ນຖານຂອງເຂົາເຈົ້າ, ຄືຄວາມສາມາດ, ຄວາມເປັນເອກະລາດ, ແລະ ຄວາມກ່ຽວຂ້ອງ, ໄດ້ຮັບການຕອບສະໜອງ. ໃນກໍລະນີນີ້, ຜູ້ຮຽນອາດຈະບໍ່ໄດ້ບັນລຸທຸກມິຕິຢ່າງເຕັມສ່ວນ. ດັ່ງນັ້ນ, ລະດັບແຮງຈູງໃຈຈຶ່ງຢູ່ໃນລະດັບປານກາງ.

ອັນທີສອງ, ການຄົ້ນຄວ້າພົບວ່າການຊຸກຍູ້ ແລະ ຄຳຍ້ອງຍໍຈາກຄູສອນມີຄະແນນສະເລ່ຍສູງສຸດໃນດ້ານແຮງຈູງໃຈ, ເຊິ່ງສະແດງໃຫ້ເຫັນວ່າການເສີມສ້າງໃນທາງບວກມີບົດບາດສຳຄັນໃນການກະຕຸ້ນຄວາມສົນໃຈຂອງຜູ້ຮຽນ. ນີ້ສອດຄ່ອງກັບ Dörnyei (2001), ຜູ້ທີ່ໄດ້ແນະນຳວ່າຍຸດທະສາດການກະຕຸ້ນໃນຫ້ອງຮຽນເຊັ່ນ: ການຍ້ອງຍໍ, ການສະໜັບສະໜູນ, ແລະ ການສ້າງບັນຍາກາດໃນທາງບວກສາມາດເພີ່ມຄວາມຕັ້ງໃຈ ແລະ ຄວາມພະຍາຍາມໃນການຮຽນຮູ້ພາສາໄດ້ຢ່າງຫຼວງຫຼາຍ.

ອັນທີສາມ, ການສົ່ງເສີມການນຳໃຊ້ພາສາອັງກິດໃນຫ້ອງຮຽນ ແລະ ການເພີ່ມຄວາມຮັບຮູ້ກ່ຽວກັບຄວາມສຳຄັນຂອງພາສາອັງກິດໃນປະຈຸບັນມີຄະແນນສະເລ່ຍທີ່ຂ້ອນຂ້າງສູງ, ຊຶ່ງໃຫ້ເຫັນວ່າກິດຈະກຳການຮຽນຮູ້ທີ່ເນັ້ນໜັກເຖິງການມີສ່ວນຮ່ວມ ແລະ ການເຊື່ອມຕໍ່ໃນຊີວິດຈິງສາມາດຊ່ວຍເພີ່ມແຮງຈູງໃຈໃນການຮຽນຮູ້. ນີ້ສອດຄ່ອງກັບ Gardner (2010), ຜູ້ທີ່ກ່າວວ່າແຮງຈູງໃຈໃນການຮຽນພາສາທີສອງເພີ່ມຂຶ້ນເມື່ອຜູ້ຮຽນເຫັນຄຸນຄ່າ ແລະ ຜົນປະໂຫຍດຂອງພາສາໃນສະພາບການຕົວຈິງ.

ຢ່າງໃດກໍຕາມ, ການຄົ້ນຄວ້າຍັງພົບວ່າຜູ້ຮຽນມີຄວາມໝັ້ນໃຈ ແລະ ຄວາມສາມາດໃນການສື່ສານກັບຜູ້ເວົ້າພາສາພື້ນເມືອງໃນລະດັບຕ່ຳ. ນີ້ອາດຈະເປັນຍ້ອນຂໍ້ຈຳກັດໃນຄວາມໝັ້ນໃຈ, ການຂາດໂອກາດໃນການຝຶກຝົນ, ຫຼື ສະພາບການຮຽນຮູ້ທີ່ບໍ່ເອື້ອອຳນວຍຕໍ່ການໃຊ້ພາສາທີ່ແທ້ຈິງ. ນີ້ສອດຄ່ອງກັບ Ryan ແລະ Deci (2020), ຜູ້ທີ່ຊີ້ບອກວ່າການຂາດຄວາມໝັ້ນໃຈ ຫຼື ການສະໜັບສະໜູນທີ່ບໍ່ພຽງພໍໃນບັນດາຜູ້ຮຽນຈະສົ່ງຜົນກະທົບຕໍ່ແຮງຈູງໃຈພາຍໃນ ແລະ ພຶດຕິກຳການຮຽນຮູ້.

## ສະຫຼຸບຜົນການວິໄຈ

ຈາກຜົນການຄົ້ນຄວ້າທີ່ໄດ້ດຳເນີນການສຶກສາ "ແຮງຈູງໃຈຕໍ່ການຮຽນ-ການສອນພາສາອັງກິດ ຂອງນັກສຶກສາສາຍຄູພາສາອັງກິດ ຊັ້ນປີທີ 1 -3 ວິທະຍາໄລຄູສົງຈຳປາສັກ ສົກປີ 2024–2025" ສາມາດສະຫຼຸບໄດ້ວ່າ ແຮງຈູງໃຈເປັນປັດໃຈພື້ນຖານທີ່ມີນັຍສຳຄັນຕໍ່ຄຸນນະພາບການຮຽນ-ການສອນພາສາອັງກິດ ທັງໃນດ້ານຂະບວນການ ແລະ ຜົນໄດ້ຮັບ.

ລະດັບແຮງຈູງໃຈໂດຍລວມຂອງຜູ້ຮຽນຢູ່ໃນລະດັບປານກາງ ຊຶ່ງສະທ້ອນໃຫ້ເຫັນວ່າ ຍັງມີຊ່ອງວ່າງໃນການພັດທະນາທີ່ຕ້ອງໄດ້ຮັບການເອົາໃຈໃສ່ຢ່າງຈິງຈັງ. ໂດຍສະເພາະ ການເສີມສ້າງໃນທາງບວກຈາກຄູ-ອາຈານ ເຊັ່ນ: ການໃຫ້ກຳລັງໃຈ ການຍ້ອງຍໍ ແລະ ການຊຸກຍູ້ໃຫ້ຜູ້ຮຽນນຳໃຊ້ພາສາອັງກິດຢ່າງຕໍ່ເນື່ອງໃນຫ້ອງຮຽນ ໄດ້ຮັບການພິສູດວ່າເປັນກົນໄກສຳຄັນທີ່ຊ່ວຍກະຕຸ້ນຄວາມສົນໃຈ ແລະ ຄວາມຕັ້ງໃຈໃນການຮຽນຮູ້ຂອງຜູ້ຮຽນ ສອດຄ່ອງກັບທິດສະດີຂອງ Dörnyei (2001) ແລະ Gardner (2010).

ນອກຈາກນີ້ ຜົນການສຶກສາຍັງຊີ້ໃຫ້ເຫັນວ່າ ແຮງຈູງໃຈມີຜົນກະທົບປານກາງຫາສູງຕໍ່ການພັດທະນາທັກສະການສະແດງອອກ ຄວາມໝັ້ນໃຈ ແລະ ຜົນສຳເລັດທາງວິຊາການຂອງຜູ້ຮຽນ ໃນຂະນະດຽວກັນ ຄວາມສາມາດໃນການສື່ສານກັບເຈົ້າຂອງພາສາຍັງຢູ່ໃນລະດັບຕ່ຳ ຊຶ່ງຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການສ້າງໂອກາດ ແລະ ສະພາບແວດລ້ອມທີ່ເອື້ອຕໍ່ການນຳໃຊ້ພາສາໃນສະຖານະການຕົວຈິງ.

ດັ່ງນັ້ນ ເພື່ອຍົກລະດັບຄຸນນະພາບການຮຽນ-ການສອນພາສາອັງກິດໃຫ້ມີປະສິດທິຜົນ ຄູ-ອາຈານຈຶ່ງຄວນມຸ່ງເນັ້ນການອອກແບບກິດຈະກຳ ແລະ ສ້າງບັນຍາກາດການຮຽນທີ່ກະຕຸ້ນແຮງຈູງໃຈພາຍໃນຂອງຜູ້ຮຽນ ໂດຍ

ເຊື່ອມໂຍງເນື້ອຫາກັບຊີວິດຈິງ ສົ່ງເສີມການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນສູນກາງ ແລະ ສ້າງຄວາມໝັ້ນໃຈໃຫ້ຜູ້ຮຽນໄດ້ສະແດງອອກຢ່າງອິດສະລະ ເພື່ອໃຫ້ການພັດທະນາທັກສະພາສາອັງກິດບັນລຸເປົ້າໝາຍທີ່ວາງໄວ້ຢ່າງຍືນຍົງ.

## ຂໍ້ສະເໜີແນະ

### ຂໍ້ສະເໜີແນະໃນການນໍາຜົນການວິໄຈໄປໃຊ້

- ຄູຄວນໃຊ້ຍຸດທະສາດການເສີມສ້າງໃນທາງບວກເຊັ່ນ: ການໃຫ້ກໍາລັງໃຈ, ການຍ້ອງຍໍ, ແລະ ຄໍາຍ້ອງຍໍເພື່ອເພີ່ມແຮງຈູງໃຈໃນການຮຽນຮູ້ຂອງນັກຮຽນຢ່າງຕໍ່ເນື່ອງ.
- ກິດຈະກໍາການຮຽນຮູ້ຄວນໃຫ້ໂອກາດນັກຮຽນໃນການໃຊ້ພາສາອັງກິດໃນສະຖານະການຕົວຈິງ, ເຊັ່ນ: ການສົນທະນາ, ການສະແດງບົດບາດ, ແລະ ການຮຽນຮູ້ໂດຍອີງໃສ່ເກມ, ເພື່ອເພີ່ມຄວາມໝັ້ນໃຈ ແລະ ທັກສະການສື່ສານ.
- ຄວນສ້າງບັນຍາກາດໃນຫ້ອງຮຽນທີ່ເປັນມິດ ແລະ ປອດໄພເພື່ອຊຸກຍູ້ໃຫ້ນັກຮຽນສະແດງອອກ ແລະ ມີສ່ວນຮ່ວມຢ່າງຫ້າວຫັນໃນການຮຽນຮູ້.
- ເນື້ອໃນການຮຽນຮູ້ຄວນເຊື່ອມໂຍງກັບຊີວິດຈິງຂອງນັກຮຽນ ແລະ ຄວາມມຸ່ງຫວັງໃນອະນາຄົດເພື່ອເນັ້ນໃຫ້ເຫັນຄຸນຄ່າ ແລະ ຄວາມສໍາຄັນຂອງພາສາອັງກິດ.
- ການຮຽນຮູ້ທີ່ເນັ້ນນັກຮຽນເປັນສູນກາງຄວນໄດ້ຮັບການສົ່ງເສີມ (ການຮຽນຮູ້ທີ່ເນັ້ນນັກຮຽນເປັນສູນກາງ) ເພື່ອກະຕຸ້ນແຮງຈູງໃຈພາຍໃນຂອງຜູ້ຮຽນ.

### ຂໍ້ສະເໜີແນະສໍາລັບການວິໄຈຄັ້ງຕໍ່ໄປ

- ຄວນສຶກສາປັດໄຈອື່ນໆທີ່ມີຜົນກະທົບຕໍ່ແຮງຈູງໃຈ, ເຊັ່ນ: ທັດສະນະຄະຕິຂອງຜູ້ຮຽນ, ສະພາບແວດລ້ອມການຮຽນຮູ້, ແລະ ເຕັກໂນໂລຊີການສຶກສາ.
- ຂະໜາດຕົວຢ່າງຄວນໄດ້ຮັບການເພີ່ມຂຶ້ນເພື່ອປັບປຸງຄວາມໜ້າເຊື່ອຖື ແລະ ການນໍາໃຊ້ຜົນການຄົ້ນຄວ້າທີ່ກວ້າງຂວາງ.
- ຄວນໃຊ້ວິທີການຄົ້ນຄວ້າແບບປະສົມປະສານເພື່ອໃຫ້ໄດ້ຂໍ້ມູນທີ່ເລິກເຊິ່ງກວ່າ.
- ການພັດທະນາຮູບແບບສໍາລັບການກະຕຸ້ນການຮຽນຮູ້ພາສາອັງກິດຄວນໄດ້ຮັບການສຶກສາໂດຍສະເພາະ.
- ຄວນມີການປຽບທຽບລະຫວ່າງລະດັບຊັ້ນຮຽນ ຫຼື ສະຖາບັນຕ່າງໆເພື່ອວິເຄາະຄວາມແຕກຕ່າງໃນແຮງຈູງໃຈໃນການຮຽນຮູ້.

## ໃບກຽດຕິຄຸນ

ບົດຄົ້ນຄວ້າສະບັບນີ້ໄດ້ຮັບຜົນສໍາເລັດດ້ວຍດີ ໂດຍໄດ້ຮັບຄວາມກະລຸນາໃຫ້ຄວາມຊ່ວຍເຫຼືອ, ຮ່ວມມື, ຊີ້ນໍາເປັນຢ່າງດີຈາກຄູທີ່ປຶກສາ ທີ່ໃຫ້ຄວາມຄິດເຫັນ, ຄໍາແນະນໍາ ແລະ ແກ້ໄຂຈຸດບົກຜ່ອງໃນທຸກຂັ້ນຕອນເພື່ອໃຫ້ບົດຄົ້ນຄວ້າເຫຼັ້ມນີ້ມີຄວາມສົມບູນ. ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄູນ ມາຍັງຜູ້ອໍານວຍການ, ຄູສອນພາສາອັງກິດ ທີ່ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກໃນການເກັບກໍາຂໍ້ມູນອັນເປັນປະໂຫຍດ ໃນການຄົ້ນຄວ້າໃນຄັ້ງນີ້ຈົນສໍາເລັດ. ຂໍສະແດງຄວາມຂອບໃຈຄະນະປະທານ ແລະ ຄະນະກໍາມະການທີ່ຮັບຜິດຊອບໃຫ້ໂອກາດຂ້າພະເຈົ້າໄດ້ດໍາເນີນການການຄົ້ນຄວ້າຄັ້ງນີ້ຈົນສໍາເລັດດ້ວຍດີ, ທ້າຍສຸດນີ້ ຜູ້ຄົ້ນຄວ້າບໍ່ມີສິ່ງໃດທີ່ຈະຕອບແທນບຸນຄຸນອັນລໍ້າຄ່າຂອງທຸກທ່ານ ມີແຕ່ຄໍາອວຍພອນໄຊອັນປະເສີດຈົ່ງເກີດແດ່ທຸກທ່ານ ຂໍໃຫ້ມີແຕ່ຄວາມສຸກກາຍສະບາຍໃຈ ແລະ ປະສົບຜົນສໍາເລັດໃນໜ້າທີ່ການງານ.

## ເອກະສານອ້າງອີງ

ກະຊວງສຶກສາ ແລະ ກິລາ. (2009). *ການນຳໃຊ້ພາສາລາວ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງຊາດ.

ສີຫັນດອນ ມະນີວົງ. (2004). *ພາສາກັບການສື່ສານ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງຊາດ.

Best, J. W., & Kahn, J. V. (2006). *Research in education* (10th ed.). Pearson Education.

Creswell, J. W. (2014). *Research design: Qualitative, quantitative, and mixed methods approaches* (4th ed.). SAGE Publications.

Deci, E. L., & Ryan, R. M. (2000). The "what" and "why" of goal pursuits: Human needs and the self-determination of behavior. *Psychological Inquiry, 11*(4), 227–268. https://doi.org/10.1207/S15327965PLI1104_01

Dörnyei, Z. (2001). *Motivational strategies in the language classroom.* Cambridge University Press.

Etikan, I., Musa, S. A., & Alkassim, R. S. (2016). Comparison of convenience sampling and purposive sampling. *American Journal of Theoretical and Applied Statistics, 5*(1), 1–4. https://doi.org/10.11648/j.ajtas.20160501.11

Gardner, R. C. (2010). *Motivation and second language acquisition: The socio-educational model.* Peter Lang.

Likert, R. (1932). A technique for the measurement of attitudes. *Archives of Psychology, 140*, 1–55.

Rovinelli, R. J., & Hambleton, R. K. (1977). On the use of content specialists in the assessment of criterion-referenced test item validity. *Dutch Journal of Educational Research, 2*, 49–60.

Ryan, R. M., & Deci, E. L. (2020). Intrinsic and extrinsic motivation from a self-determination theory perspective: Definitions, theory, practices, and future directions. *Contemporary Educational Psychology, 61*, 101860. https://doi.org/10.1016/j.cedpsych.2020.101860

Shumin, K. (1998). Factors to consider: Developing adult EFL students' speaking abilities. In J. C. Richards & W. A. Renandya (Eds.), *Methodology in language teaching: An anthology of current practice* (pp. 204–211). Cambridge University Press.